# SIREN

**STRATEGIC INFORMATION RESPONSE NETWORK**

**ອົງການ ສະຫະປະຊາຊາດ - ໂຄງການຕ້ານການຄ້າມະນຸດ (UNIAP): ໄລຍະ III**

**ບາງກອກ, ປະເທດໄທ**

ມິຖຸນາ 2007 | ອະນຸພາກພື້ນລຸ່ມແມ່ນ້ຳຂອງ (GMS)-01

# ບົດສະເໜີກ່ຽວກັບ SIREN

## (ຍຸດທະສາດການ ໂຕ້ຕອບດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ)




### *ຍຸດທະສາດການໂຕ້ຕອບດ້ວຍເຄືອຂ່າຍຂໍ້ມູນຂ່າວສານ ແມ່ນຫຍັງ ?*

*ຍຸດທະສາດການໂຕ້ຕອບດ້ວຍເຄືອຂ່າຍຂໍ້ມູນຂ່າວສານ (SIREN) ແມ່ນແນວຄວາມຄິດໃໝ່ ທີ່ສະໜັບສະໜູນໂດຍ UNIAP ເພື່ອກະຈາຍຂໍ້ມູນ ແລະ ການວິໄຈກ່ຽວກັບບັນຫາໃໝ່ທີ່ພົ້ນເດັ່ນ ຢູ່ໃນຂົງເຂດການຄ້າມະນຸດ ໃຫ້ມີຄຸນນະພາບສູງ, ມີລັກສະນະໂຕ້ຕອບ ແລະທັນເຫດການ. ເປົ້າໝາຍແມ່ນເພື່ອລາຍງານ ແລະ ຂົນຂວາຍຊຸກຍູ້ ບັນດາຄູ່ຮ່ວມງານຢູ່ໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ-ລັດຖະບານແລະບໍ່ສັງກັດລັດ- ໃຫ້ມີຄວາມຕື່ນຕົວ ແລະ ມີປະຕິກິລິຍາ ຕໍ່ກັບບັນຫາທີ່ເກີດຂຶ້ນ.*

*SIREN ມີຈຸດປະສົງເພື່ອປ້ອນຂໍ້ມູນໃຫ້ແກ່ຂະແໜງການ ຕ້ານການຄ້າມະນຸດໃນຫຼາຍຮູບແບບທີ່ແຕກຕ່າງກັນເຊັ່ນ: ບົດລາຍງານສັ້ນ, ແຜນທີ່, ແຜ່ນພັບຂໍ້ມູນຂ່າວສານ ແລະ ກອງປະຊຸມສົນທະນາ. ການຄົ້ນຄວ້າ, ການຢັ້ງຢືນ ແລະ ການວິໄຈ ຈະຖືກປະຕິບັດຢູ່ພາກສະໜາມ ໂດຍອົງການຈັດຕັ້ງທີ່ປະຈຳຢູ່ທ້ອງຖິ່ນ, ອົງການຈັດຕັ້ງຂອງລັດຖະບານ ແລະ ສາກົນ ແລະ/ຫຼື ໂດຍ UNIAP ເອງ. ເປົ້າໝາຍກໍ່ເພື່ອນຳເອົາຂໍ້ມູນ ແລະ ສະພາບຄວາມເປັນຈິງກ່ຽວກັບບັນຫາ ທີ່ເປັນບູລິມະສິດ ຈາກຂັ້ນຮາກຖານ ຂຶ້ນມາຂັ້ນສູນກາງ ແລະ ອະນຸພາກພື້ນ ແລະ ຈາກຂັ້ນສູນກາງ ແລະ ພາກພື້ນ ລົງສູ່ຂັ້ນຮາກຖານ.*

## SIREN: ແມ່ນຫຍັງ, ຍ້ອນຫຍັງ ແລະ ມາຈາກໃສ?

### *SIREN ແມ່ນຫຍັງ... ແລະ ບໍ່ແມ່ນຫຍັງ?*

SIREN ບໍ່ແມ່ນການຄົ້ນຄວ້າທີ່ໃຫຍ່ໂຕມະໂຫຖານຂອງສະຖາບັນການສຶກສາ, ບໍ່ແມ່ນການກະຕຸກຊຸກຍູ້ສິ່ງເສີມ, ບໍ່ແມ່ນການຕີລາຄາປະເມີນຜົນແບບໄວວາຄັ້ງດຽວ. SIREN ແມ່ນການເຮັດວຽກພາກສະໜາມແບບມີເປົ້າໝາຍ, ແມ່ນການວິໄຈ ແລະ ການສົນທະນາແບບແບ່ງເປັນໜ່ວຍກ່ຽວກັບບັນຫາໃໝ່ທີ່ພົ້ນເດັ່ນ ຫຼື ການຫາວິທີປິດຊ່ອງວ່າງ ໃນວຽກງານການຕ້ານການຄ້າມະນຸດ. ບັນຫາທີ່ ຍົກຂຶ້ນແມ່ນບັນດາບັນຫາທີ່ຄູ່ຮ່ວມງານຖືເປັນບູລິມະສິດຂັ້ນສູງຂອງພາກພື້ນ, ຂອງຊາດ ແລະ ຂອງທ້ອງຖິ່ນ, ໂດຍອີງໃສ່ຂໍ້ມູນທີ່ໄດ້ຈາກແຫຼ່ງທີ່ຢູ່ໃກ້ກັບເຫດການທີ່ສຸດ. ດັ່ງນັ້ນ, ບົດລາຍງານ, ແຜນທີ, ເຫດການ ແລະ ການສົນທະນາ ຂອງ SIREN ຈຶ່ງມີເປົ້າໝາຍເພື່ອເຮັດໃຫ້ ການສຳຫຼວດ ແລະ ການວິໄຈ ທີ່ມີຢູ່ແລ້ວນັ້ນມີຄວາມສົມບູນຂຶ້ນ, ໂດຍດຳເນີນໄປຄຽງຄູ່ກັບການສ້າງ ແລະ ວິໄຈຂໍ້ມູນ ແບບສະເພາະ ແລະ ຖືກຕ້ອງ ເພື່ອອູ້ມຊູການປະຕິບັດງານ ຫຼື ປ້ອນຂໍ້ມູນໃຫ້ແກ່ການຕັດສິນໃຈກ່ຽວກັບການດຳເນີນກິດຈະກຳ.

### *ເປັນຫຍັງ UNIAP ຈຶ່ງສ້າງ SIREN?*

UNIAP ໄລຍະ III ເລີ່ມຕົ້ນທ້າຍປີ 2006, ໂດຍມີໜ້າທີ່ຕົ້ນຕໍ - ທີ່ຮັບຮອງໂດຍລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ ແລະ ອົງການສະຫະປະຊາຊາດ - ເພື່ອ:

- ອຳນວຍຄວາມສະດວກ ສູງສຸດ ໃນການສ້າງເປົ້າໝາຍ ແລະ ແຈກຢາຍ ອຸປະກອນ ສຳລັບການຕ້ານການຄ້າມະນຸດ ໂດຍໝັ້ນໃຈວ່າ ການສ້າງ ແລະ ການປະຕິບັດກິດຈະກຳ ຕ້ານການຄ້າມະນຸດ ຕ່າງໆ ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ການວິໄຈ ແລະ ການຖອດຖອນບົດຮຽນທີ່ທັນສະພາບ; ແລະ
- ສືບຕໍ່ພາລະບົດບາດການເປັນຈຸດສູນກາງ ສຳລັບວຽກງານຕ້ານການຄ້າມະນຸດ ໂດຍການວິໄຈ ແລະ ສະໜັບສະໜູນໂຄງການພິເສດ ເພື່ອຍົກໃຫ້ເຫັນບັນຫາ ແລະ ກາລະໂອກາດໃໝ່ ແລະ ພົ້ນເດັ່ນ.

ນອກຈາກນັ້ນແລ້ວ, ໃນຖານະກອງເລຂາ ຂອງຂະບວນການ COMMIT, UNIAP ຍັງມີໜ້າທີ່ ຕາມທີ່ບົ່ງໄວ້ໃນມາດຕາທີ 29 ຂອງບົດບັນທຶກຄວາມເຂົ້າໃຈຂອງ COMMIT ດັ່ງນີ້:

- ສ້າງຫຼັກການສຳລັບ ການເກັບກຳ ແລະ ວິໄຈຂໍ້ມູນ ແລະ ຂ່າວສານ ກ່ຽວກັບກໍລະນີການຄ້າມະນຸດ ແລະ ໝັ້ນໃຈວ່າ ຍຸດທະສາດ ການຕ້ານການຄ້າມະນຸດແມ່ນຢູ່ບົນພື້ນຖານ ການຄົ້ນຄວ້າ, ປະສົບການ ແລະ ການວິໄຈ ທີ່ຖືກຕ້ອງ ແລະ ທັນສະພາບ.

ສິ່ງດັ່ງກ່າວແມ່ນວຽກງານການໃຫ້ການບໍລິການ, ເຊິ່ງຢູ່ພາຍໃຕ້ຂອບເຂດວຽກງານ ການແລກປ່ຽນຂໍ້ມູນຂ່າວສານ ທີ່ UNIAP ໄດ້ປະຕິບັດ ນັບແຕ່ປີ 2000 ເປັນຕົ້ນມາ - ການເຮັດວຽກກັບ ຄູ່ຮ່ວມງານ ຝ່າຍລັດຖະບານ, ໜ່ວຍງານບໍ່ສັງກັດລັດ ແລະ ຊຸມຊົນ ເພື່ອ ວິໄຈຊ່ອງຫວ່າງ ແລະ ວິທີທາງ ເພື່ອປັບປຸງ ຄວາມຮັບຮູ້ ແລະ ຂໍ້ມູນຕົວຈິງ ເພື່ອຕອບສະໜອງໃຫ້ກິດຈະກຳຕ້ານການຄ້າມະນຸດ ຂອງທຸກອົງການຈັດຕັ້ງ.

UNIAP ແມ່ນຢູ່ໃນຈຸດຢືນທີ່ມີລັກສະນະສະເພາະໃນການບໍລິການເປັນຂົວຕໍ່ລະຫວ່າງລັດຖະບານຂອງບັນດາປະເທດພາກພື້ນລຸ່ມແມ່ນ້ຳຂອງ ແລະ ຄູ່ຮ່ວມງານທີ່ບໍ່ສັງກັດລັດຖະບານ ທີ່ເຮັດວຽກຕ້ານການຄ້າມະນຸດ. ໂດຍອີງໃສ່ຜົນປະໂຫຍດທີ່ໄດ້ຈາກການພົວພັນທີ່ແໜ້ນແຟ້ນດັ່ງກ່າວ, ສົມທົບກັບຄວາມໝາຍໝັ້ນທີ່ຈະໂຕ້ຕອບອາດສະຍາກຳຄ້າມະນຸດຢູ່ໃນອະນຸພາກພື້ນລຸ່ມແມ່ນ້ຳຂອງຢ່າງເປັນຮູບປະທຳ, SIREN ຈະຊີ້ທິດໃຫ້ແກ່ກິດຈະກຳ ແລະ ການເອົາໃຈໃສ່ໃນການຕ້ານການຄ້າມະນຸດ ກ່ຽວກັບວຽກງານທີ່ຕ້ອງໄດ້ເອົາໃຈໃສ່ປະຕິບັດ - ຫຼືຢ່າງນ້ອຍໄດ້ຮັບການປະຕິບັດ ຢ່າງເໝາະສົມ. ນອກຈາກນັ້ນ SIREN ຍັງຕອບສະໜອງຄວາມຕ້ອງການໂດຍລວມ ໃນການສ້າງກິດຈະກຳໂດຍອີງໃສ່ການສຳຫຼວດຕົວຈິງ ແລະ ການຄົ້ນຫາຄວາມເຊື່ອຖື ແລະ ຄວາມປອດໃສ ຢູ່ໃນຂອບເຂດວຽກງານ. ການສ່ອງແສງໃຫ້ເຫັນຂົງເຂດວຽກງານທີ່ຕ້ອງໄດ້ເອົາໃຈໃສ່ ແລະ ປະຕິບັດຫຼາຍຂຶ້ນ ມັນແມ່ນອີກວິທີໜຶ່ງຂອງການຕີລາຄາປະເມີນຜົນວ່າການເຄື່ອນໄຫວ ຂອງວຽກງານຕ້ານການຄ້າມະນຸດມີຢູ່ໃສແດ່ ແລະ ຢູ່ບ່ອນໃດຄວນຈະມີການເຄື່ອນໄຫວ.

## *SIREN ຄາດຫວັງຫຍັງ - ແລະ ເລັງເປົ້າໝາຍໃສ່ໃຜ?*

ເປົ້າໝາຍຂອງ SIREN ການຕອບສະໜອງ ແລະ ສ້າງຄວາມເຊື່ອຖື: ສະໜອງການພົບປະສົນທະນາ ສຳລັບການແລກປ່ຽນຂໍ້ມູນຂ່າວສານ ແລະ ການວິໄຈແຫຼ່ງຂໍ້ມູນທີ່ມີຄຸນນະພາບສູງ ໃນຮູບແບບທີ່ງ່າຍດາຍສຳລັບການຊົມໃຊ້ ໃຫ້ແກ່ຜູ້ທີ່ຕ້ອງການຂໍ້ມູນຂ່າວສານດັ່ງກ່າວ ສຳລັບການຮ່າງແຜນການ, ການດຳເນີນຄະດີ ຫຼື ການວາງນະໂຍບາຍ ທີ່ມີປະສິດທິພາບ. ສິ່ງດັ່ງກ່າວປະກອບມີ:

- ບົດລາຍງານພາກສະໜາມຈາກອົງການຈັດຕັ້ງປະຈຳພື້ນຖານທີ່ຜ່ານການວິໄຈ;
- ບົດວິພາກກ່ຽວກັບບັນຫາເຄັ່ງຮ້ອນທີ່ເກີດຂຶ້ນໃໝ່;
- ແຜ່ນພັບທີ່ບັນຈຸຂໍ້ມູນທີ່ທັນສະພາບຈາກແຫຼ່ງທີ່ເຊື່ອຖືໄດ້;
- ແຜນທີ່ຂອງກິດຈະກຳ, ແຜນທີ່ຂອງເຂດມີຄວາມສ່ຽງທີ່ສຸດ ແລະ ອຸປະກອນຊ່ວຍເຫຼືອໃນການວາງແຜນ ອື່ນໆ;
- ການພົບປະສົນທະນາ ເພື່ອຄົ້ນຫາສາເຫດຕົ້ນຕໍຂອງບັນຫາທີ່ພົວພັນຫຼາຍດ້ານ ແລະ ຮີບດ່ວນ.

ກຸ່ມເປົ້າໝາຍ, ເຊິ່ງອີງໃສ່ບັນຫາທີ່ຍົກຂຶ້ນ, ອາດຈະເປັນອົງການຈັດຕັ້ງທີ່ດຳເນີນກິດຈະກຳຢູ່ຕາມຊຸມຊົນ, ອົງການຈັດຕັ້ງສາກົນ (ສັງກັດລັດ ແລະ ບໍ່ສັງກັດລັດ), ຜູ້ໃຫ້ທຶນ, ຜູ້ວາງນະໂຍບາຍ, ຕຳຫຼວດ, ນັກກົດໝາຍ ແລະ ອື່ນໆ ຈາກ ຂະແໜງການຍຸຕິທຳ ແລະ/ຫຼື ສະຖາບັນການສຶກສາ.

ພື້ນຖານທີ່ສຳຄັນຂອງ SIREN ແມ່ນລະບົບເຄືອຂ່າຍ - ຍຸດທະສາດການໂຕ້ຕອບດ້ວຍເຄືອຂ່າຍຂໍ້ມູນຂ່າວສານ ເຊິ່ງມີຊື່ຫຍໍ້ແມ່ນ SIREN. ດັ່ງນັ້ນ, ບໍ່ວ່າຈະຢູ່ໃນເອກະສານ ຫຼື ຢູ່ໃນເວທີສົນທະນາ, ສ່ວນຫຼາຍ SIREN ຈະຖືກດຳເນີນການ ແລະ ແຈ້ງໃຫ້ຮັບຊາບເພື່ອແລກປ່ຽນ (ໂດຍວິທີທີ່ປອດໄພ ແລະ ບໍ່ອອກນາມ, ຖ້າຈຳເປັນ) ໂດຍອົງການຈັດຕັ້ງທີ່ມີຂໍ້ມູນທີ່ໜ້າເຊື່ອຖື ແລະ ທັນສະພາບ, ຮ່ວມກັບອົງການຈັດຕັ້ງ ທີ່ສາມາດຊ່ວຍເຫຼືອໃນການຮັກສາຄວາມເຂັ້ມງວດ ແລະ ການສະໜັບສະໜູນດ້ານວິທີການສຳລັບການຄວບຄຸມຄຸນນະພາບ ແລະຮ່ວມກັບພາກສ່ວນທີ່ສາມາດຕອບສະໜອງຄວາມເຫັນທີ່ສຳຄັນອື່ນໆເຊັ່ນ: ດ້ານນະໂຍບາຍ, ການບັງຄັບໃຊ້ກົດໝາຍ ຫຼື ການບໍລິຫານກິດຈະກຳ.
ເປົ້າໝາຍຕົ້ນຕໍຂອງ UNIAP ແມ່ນການສະໜອງການຈັດກອງປະຊຸມສົນທະນາ, ການຊ່ວຍເຫຼືອດ້ານວິຊາການ ແລະ ລະບົບເຄືອຂ່າຍ ແລະ ການແຈກຢາຍກົງຈັກການເຮັດວຽກ ໃຫ້ແກ່ອົງການຈັດຕັ້ງ ແລະ ໜ່ວຍງານຕ່າງໆ ເພື່ອແລກປ່ຽນ

ຄວາມຮູ້, ຖອດຖອນບົດຮຽນ ແລະ ການປະສານງານ - ເພື່ອເລີ່ມຕົ້ນ ແລະ ປັບປຸງ ກິດຈະກຳ ຕ້ານການຄ້າມະນຸດ. ເພາະສະນັ້ນ, SIREN ຈະບໍ່ສະທ້ອນໃຫ້ເຫັນແນວຄິດ ແລະ ຈຸດຢືນ ຂອງ UNIAP ສະເໝີໄປ.

## *ເຮັດແນວໃດ ບຸກຄົນ ແລະ ອົງການຈັດຕັ້ງຈະຮຽນຮູ້ ແລະ ປະກອບສ່ວນເຂົ້າໃນ SIREN ໄດ້ຫຼາຍຂຶ້ນ?*

ທ່ານແມ່ນບຸກຄົນ, ນັກສຶກສາ, ອົງການຈັດຕັ້ງ ຫຼື ໜ່ວຍງານ ທີ່ຕ້ອງການຄົ້ນຫາຄວາມເປັນໄປໄດ້ໃນການປະກອບສ່ວນຜົນງານເຂົ້າໃນ SIREN ຫຼື ມີແນວຄິດຈັດກອງປະຊຸມສົນທະນາບໍ? ຖ້າແມ່ນກະລຸນາຕິດຕໍ່ Paul Buckley ພະນັກງານ ຂອງ UNIAP ທີ່ Paul.Buckley@undp.or.th, ເພື່ອສະເໜີຫົວຂໍ້ ຫຼື ອອກຄຳເຫັນ, ຫຼືສົນທະນາກ່ຽວກັບການມີສ່ວນຮ່ວມ ຫຼື ປະກອບສ່ວນຜົນງານເຂົ້າໃນ SIREN.

**ຕ້ອງການຮຽນຮູ້ກ່ຽວກັບ UNIAP ຫຼາຍຂຶ້ນຕື່ມ, ກະລຸນາໄປທີ່ www.no-trafficking.org.**